*ສະບັບສຸດທ້າຍ*

# ບົດແນະນຳ
# ໃນການກະກຽມກອງປະຊຸມໂຕະມົນ
# ປະຈຳປີ 2018
# (2018 RTM)

ກົມຮ່ວມມືສາກົນ,
ກະຊວງ ແຜນການ ແລະ ການລົງທຶນ
ມິຖຸນາ 2018

# ສາລະບານ


**I. ພາກສະເໜີ** .......... 1

**II. ກອງປະຊຸມໂຕະມົນປະຈຳປີ 2018** .......... 2

**2.1 ຈຸດປະສົງລວມ** .......... 2

**2.2 ຫົວຂໍ້ຂອງກອງປະຊຸມໂຕະມົນປະຈຳປີ 2018** .......... 3

**2.3 ການປຶກສາຫາລື, ຮູບແບບ, ສະຖານທີ່ ແລະ ປະເດັນຕ່າງໆທີ່ກ່ຽວຂ້ອງ** .......... 3

**III. ການສົນທະນາ, ປຶກສາຫາລື ແລະ ປະສານງານ ຢູ່ໃນລະດັບໜ່ວຍງານຂະແໜງການ** .......... 7

**3.1 ແຜນວຽກທີ່ເລັ່ງໃສ່ໝາກຜົນ** .......... 7

**3.2 ຂອບໜ້າວຽກສະບັບປັບປຸງ** .......... 7

**3.3 ແຜນການຈັດກິດຈະກຳຕ່າງໆ** .......... 7

**3.4 ການຈັດກອງປະຊຸມລະດັບຕ່າງໆ ຂອງໜ່ວຍງານຂະແໜງການ ແລະ ປະເດັນສຳຄັນ ທີ່ຈະນຳໄປປຶກສາຫາລືກັນ ໃນກອງປະຊຸມໂຕະມົນລະດັບສູງ 2018** .......... 7

**3.5 ກອງເລຂາຂະບວນການໂຕະມົນ ພົບປະກັບກອງເລຂາຂອງບັນດາໜ່ວຍງານຂະແໜງ ການ** .......... 8

**3.6 ກອງປະຊຸມປະທານ ແລະ ປະທານຮ່ວມຂອງໜ່ວຍງານຂະແໜງການເພື່ອປຶກສາຫາລືກັບຜູ້ໃຫ້ທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ** .......... 8

**3.7 ງານວາງສະແດງ ຜົນສຳເລັດ ຂອງວຽກງານການຮ່ວມມືເພື່ອການພັດທະນາ** .......... 8

**IV. ບັນດາກິດຈະກຳ ແລະ ກອງປະຊຸມປຶກສາຫາລືຕ່າງໆທີ່ສຳຄັນ ເພື່ອກະກຽມໃສ່ກອງປະຊຸມໂຕະມົນປະຈຳປີ 2018** .......... 9

**4.1 ແຜນກິດຈະກຳ ແລະ ກຳນົດເວລາ** .......... 9

**ຂໍ້ມູນຫຼ້າສຸດກ່ຽວກັບແຜນກິດຈະກຳ, ການປຶກສາຫາລື ແລະ ວຽກງານອື່ນໆ ກ່ຽວກັບ ຂະບວນການໂຕະມົນ ລວມທັງໜ່ວຍງານຂະແໜງການ ແມ່ນຈະໄດ້ເຜີຍແຜ່ລົງໃນເວັບໄຊທ໌ຂອງຂະບວນການໂຕະມົນ (http://rtm.org.la) ຢ່າງເປັນປົກກະຕິ** .......... 11

**4.2 ຈຸດປະສານງານພາຍໃນກົມຮ່ວມມືສາກົນ (ກະຊວງແຜນການ ແລະ ການລົງທຶນ)** .......... 12

**ເອກະສານຊ້ອນທ້າຍ :1 ຂໍ້ສະເໜີແນະຕົ້ນຕໍຈາກກອງປະຊຸມໂຕະມົນປະຈຳປີ 2017** .......... 13

# I. ພາກສະເໜີ

ຂະບວນການໂຕະມົນ ກໍ່ຄືກົນໄກໜ່ວຍງານຂະແໜງການເພື່ອປຶກສາຫາລືກັບຜູ້ໃຫ້ທຶນ ໄດ້ສືບຕໍ່ຊຸກຍູ້ການປຶກສາຫາລືດ້ານນະໂຍບາຍການພັດທະນາຂອງຊາດ, ພ້ອມທັງຊ່ວຍເພີ່ມທະວີປະສິດທິຜົນຂອງການພັດທະນາ ແລະ ການປະສານງານດ້ານການຊ່ວຍເຫຼືອ ຢູ່ພາຍໃນປະເທດນຳອີກ ໂດຍສະເພາະແມ່ນໄດ້ໃຫ້ຄຳແນະນຳໃນການປັບປຸງບັນດານະໂຍບາຍແຫ່ງຊາດ ແລະ ໜ້າວຽກຕ່າງໆຂອງລັດຖະບານ ກໍ່ຄືບັນດາຄູ່ຮ່ວມພັດທະນາ ເພື່ອຮັບປະກັນໃຫ້ປະຊາຊົນໄດ້ຮັບຜົນປະໂຫຍດຫຼາຍຂຶ້ນ ຈາກການຮ່ວມມືເພື່ອການພັດທະນາ.

ໃນຊຸມປີຜ່ານມາ, ຂະບວນການໂຕະມົນ ໄດ້ມີຄວາມເຂັ້ມແຂງຂຶ້ນກວ່າເກົ່າໃນຫຼາຍດ້ານ ດັ່ງລຸ່ມນີ້ :

- ໄດ້ສ້າງຄວາມເຊື່ອໝັ້ນ ແລະ ສາຍພົວພັນອັນດີ ລະຫວ່າງ ລັດຖະບານ ແລະ ບັນດາຄູ່ຮ່ວມພັດທະນາ ລວມທັງພາກເອກະຊົນ, ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ (INGOs), ສະມາຄົມທີ່ບໍ່ຫວັງຜົນກຳໄລ (NPAs) ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ.
- ໂຄງສ້າງ ແລະ ຮູບແບບຂອງກອງປະຊຸມໂຕະມົນລະດັບສູງ ກໍ່ຄືກອງປະຊຸມໂຕະມົນປະຈຳປີ ໄດ້ຮັບການປັບປຸງໃຫ້ດີຂຶ້ນກວ່າເກົ່າເພື່ອຊຸກຍູ້ວຽກງານການຮ່ວມມືເພື່ອການພັດທະນາ ຢູ່ພາຍໃນປະເທດໃຫ້ຫຼາຍຂຶ້ນ.
- ດ້ານການສົນທະນາ ກໍ່ໄດ້ຂະຫຍາຍເວລາສຳລັບການສົນທະນາໃຫ້ຫຼາຍຂຶ້ນກວ່າເກົ່າ ດ້ວຍການອອກແບບ ແລະ ກຳນົດໃນວາລະກອງປະຊຸມ ຊຶ່ງສະແດງໃຫ້ເຫັນຢູ່ໃນມື້ກອງປະຊຸມໂຕະມົນທີ່ໄດ້ປຶກສາຫາລື ກ່ຽວກັບ ຜົນຂອງກອງປະຊຸມລະດັບວິຊາການ ທີ່ໄດ້ຈັດຂຶ້ນກ່ອນຮອດກອງປະຊຸມໂຕະມົນ, ພ້ອມນັ້ນ ກໍ່ເປີດໂອກາດໃຫ້ຜູ້ເຂົ້າຮ່ວມໄດ້ສ້າງສາຍສຳພັນ ແລະ ສົນທະນາກັນຢ່າງບໍ່ເປັນທາງການໂດຍການ ຈັດການລົງຢ້ຽມຢາມໂຄງການພາກສະໜາມ ແລະ ງານວາງສະແດງຜົນງານຂອງໂຄງການພັດທະນາຕ່າງໆໂດຍສົ່ງເສີມໃຫ້ມີການສົນທະນາກັນຢ່າງກົງໄປກົງມາ.
- ລັດຖະບານມີຄວາມເປັນເຈົ້າການໃນຂະບວນການປຶກສາຫາລືເພື່ອກຽມໃສ່ກອງປະຊຸມໂຕະມົນລະດັບສູງ/ກອງປະຊຸມໂຕະມົນປະຈຳປີ. ຊຶ່ງການປຶກສາຫາລືເພື່ອກະກຽມໃສ່ກອງປະຊຸມໂຕະມົນໃນໄລຍະສອງປີຜ່ານມາ ໄດ້ "ຂະຫຍາຍ ບົດບາດ" ຂອງຂະບວນການໂຕະມົນໃຫ້ກວ້າງອອກໃນແງ່ທີ່ວ່າເປັນການປຶກສາຫາລືດ້ານນະໂຍບາຍຢ່າງເລິກເຊິ່ງກວ່າເກົ່າ ທີ່ສາມາດສັງລວມຄຳແນະນຳຕ່າງໆ ສຳລັບກອງປະຊຸມໂຕະມົນ.
- ສຳລັບການຈັດກອງປະຊຸມໂຕະມົນປະຈຳປີຢູ່ຂັ້ນແຂວງນັ້ນ ກໍ່ເປັນໂສມໜ້າໃໝ່ຂອງຂະບວນການໂຕະມົນ ແລະ ເປີດໂອກາດໃຫ້ຄະນະຜູ້ແທນສາມາດເຂົ້າຮ່ວມການລົງຢ້ຽມຢາມໂຄງການພາກສະໜາມ ທີ່ຕິດພັນກັບຫົວຂໍ້ທີ່ສົນທະນາໃນກອງປະຊຸມ.
- ລັດຖະບານ ໄດ້ພະຍາຍາມຢ່າງຕັ້ງໜ້າໃນການກຳນົດ ຮ່າງວາລະກອງປະຊຸມໂຕະມົນຢ່າງໜ້ອຍຫົກເດືອນ ກ່ອນການປຶກສາຫາລືກັນ ລະຫວ່າງ ລັດຖະບານ ແລະ ບັນດາຄູ່ຮ່ວມພັດທະນາ ລວມທັງ ການກະກຽມ ແລະ ລາຍງານ ຜ່ານກົນໄກກອງປະຊຸມປະທານ ແລະ ປະທານຮ່ວມຂອງໜ່ວຍງານຂະແໜງການ.

ກອງປະຊຸມໂຕະມົນປະຈຳປີ 2017 ຜ່ານມາ ທີ່ໄດ້ຈັດຂຶ້ນໃນວັນທີ 22-23 ພະຈິກ 2017 ຢູ່ແຂວງຈຳປາສັກ ກໍ່ໄດ້ຮັບຄຳຍ້ອງຍໍຊົມເຊີຍຈາກທັງຝ່າຍລັດຖະບານ ແລະ ຄູ່ຮ່ວມພັດທະນາຢ່າງກວ້າງຂວາງ ວ່າເປັນກອງປະຊຸມທີ່ມີຜົນສຳເລັດສູງ, ເນື່ອງຈາກກອງປະຊຸມດັ່ງກ່າວ ແມ່ນໄດ້ເປີດໂອກາດໃຫ້ທຸກພາກສ່ວນ ໄດ້ສະແດງຄຳຄິດຄຳເຫັນຢ່າງຈິງໃຈ ແລະ ກົງໄປກົງມາ, ກວມໝົດທຸກດ້ານ, ມີການກະກຽມທີ່ຄົບຖ້ວນ ແລະ ໄດ້ຮັບໝາກຜົນຢ່າງເປັນຮູບປະທຳ. ຊຶ່ງຜົນຂອງກອງປະຊຸມໂຕະມົນປະຈຳປີ (ເອກະສານຊ້ອນທ້າຍ 1) ໄດ້ຖືກພັນຂະຫຍາຍມາເປັນແຈ້ງການຂອງ ນາຍົກລັດຖະມົນຕີ ໃຫ້ແກ່ບັນດາກະຊວງຂະແໜງ ການ, ແຂວງ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງຈັດຕັ້ງປະຕິບັດໃຫ້ເກີດດອກອອກຜົນ

ພ້ອມກັນນີ້ກໍ່ໄດ້ ຮຽກຮ້ອງໃຫ້ທຸກພາກສ່ວນຮ່ວມມືກັນຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ VIII (2016-2020) ສໍາລັບໄລຍະເວລາທີ່ຍັງເຫຼືອ ໃຫ້ໄດ້ຕາມຄາດໝາຍ.

ອີງຕາມຜົນສໍາເລັດທີ່ຍາດມາໄດ້ໃນໄລຍະຜ່ານມາ, 2018 ເປັນປີທີ່ມີຄວາມສໍາຄັນຫຼາຍສໍາລັບສປປ ລາວ ເຊິ່ງນອກຈາກຈະເປັນ "ປີທ່ອງທ່ຽວລາວ" ແລ້ວ, ຍັງເປັນປີທີ່ມີຄາດໝາຍບຸກທະລຸໃນຫຼາຍດ້ານເຊັ່ນ:

- ການສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII,
- ການກະກຽມໃສ່ການປະເມີນການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາເຊິ່ງຈະໄດ້ຈັດຂຶ້ນໃນເດືອນ ມີນາ 2018,
- ການກະກຽມບົດປະເມີນຄວາມຄືບໜ້າການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ (SDGs) ແຫ່ງຊາດແບບສະໝັກໃຈ ຊຶ່ງຈະໄດ້ນໍາໄປສະເໜີຕໍ່ ກອງປະຊຸມປຶກສາຫາລືທາງດ້ານການເມືອງລະດັບສູງ ກ່ຽວກັບ SDGs ໃນເດືອນ ກໍລະກົດ 2018,
- ການທົບທວນຄືນການຈັດຕັ້ງປະຕິບັດແຜນດໍາເນີນງານຖະແຫຼງການວຽງຈັນ ໃຫ້ສອດຄ່ອງກັບການສໍາຫຼວດຂອງສາກົນ ຄັ້ງທີ 3 ກ່ຽວກັບ ການເປັນຄູ່ຮ່ວມສໍາລັບການຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນ,
- ການກະກຽມສ້າງບົດລາຍງານການພັດທະນາມະນຸດແຫ່ງຊາດ, ແລະ
- ການສໍາເລັດການສໍາຫຼວດຕ່າງໆ ເປັນຕົ້ນ ການສໍາຫຼວດແຮງງານ, ການສໍາຫຼວດດັດສະນີໝາຍສັງຄົມລາວ ແລະອື່ນໆ ເພື່ອການຕິດຕາມກວດກາ ແລະ ລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດນະໂຍບາຍການພັດທະນາແຫ່ງຊາດ.

ກອງປະຊຸມໂຕະມົນປະຈໍາປີ 2018 ທີ່ຈະມາເຖິງນີ້ ແມ່ນເປັນຂີດໝາຍທີ່ຊີ້ບອກວ່າພວກເຮົາໄດ້ກ້າວມາເຖິງເຄິ່ງທາງ ຂອງການກະກຽມກອງປະຊຸມໂຕະມົນລະດັບສູງ ທີ່ຈະຈັດຂຶ້ນໃນປີ 2020. ເພື່ອເຮັດໃຫ້ກອງປະຊຸມມີຄວາມໝາຍສໍາຄັນ, ພວກເຮົາອາດຈະໃຊ້ກົນລະຍຸດໃນການຈັດກອງປະຊຸມໂຕະມົນປະຈໍາປີ 2018 ໃຫ້ເປັນກອງປະຊຸມໂຕະມົນອາລະພິເສດ.

# II. <u>ກອງປະຊຸມໂຕະມົນປະຈໍາປີ 2018</u>

## 2.1 ຈຸດປະສົງລວມ

ຈຸດປະສົງລວມຂອງກອງປະຊຸມໂຕະມົນປະຈໍາປີ 2018 ແມ່ນ:

1. ເພື່ອລາຍງານຜົນສໍາເລັດຕົ້ນຕໍຂອງ:
   - ການສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII,
   - ການເຊື່ອມສານ ແລະຜັນຂະຫຍາຍເປົ້າໝາຍ SDGs ເຂົ້າໃນນະໂຍບາຍການພັດທະນາແຫ່ງຊາດອີງໃສ່ບົດປະເມີນຄວາມຄືບໜ້າການຈັດຕັ້ງປະຕິບັດ SDGs ແຫ່ງຊາດແບບສະໝັກໃຈຄັ້ງທໍາອິດ ທີ່ໄດ້ນໍາສະເໜີຕໍ່ກອງປະຊຸມເວທີປຶກສາຫາລືດ້ານການເມືອງລະດັບສູງ ທີ່ ສໍານັກງານໃຫຍ່ຂອງອົງການ ສປຊ ໃນເດືອນ ກໍລະກົດ 2018,
   - ຜົນການປະເມີນສະຖານະພາບປະເທດດ້ອຍພັດທະນາທີ່ຈັດຂຶ້ນໃນເດືອນມີນາ 2018,
   - ການຈັດຕັ້ງປະຕິບັດຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ ແລະ ແຜນດໍາເນີນງານຖະແຫຼງການວຽງຈັນດັ່ງກ່າວ (VD CAP) (https://rtm.org.la/about/the-vientiane-declaration/).

2. ເພື່ອກໍານົດໜ້າວຽກລະອຽດ ໂດຍສະເພາະດ້ານທຶນຮອນເພື່ອການພັດທະນາ ແລະ ການສ້າງຄວາມສາມາດໃນການແກ້ໄຂສິ່ງທ້າທາຍຕົ້ນຕໍຕ່າງໆ ສໍາລັບໄລຍະເວລາທີ່ຍັງເຫຼືອຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ VIII (2016-2020) ແລະ ຫົວຂໍ້ຕົ້ນຕໍ/ຂົງເຂດບູລິມະສິດສໍາລັບການກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ IX (2021-2025).

## 2.2 ຫົວຂໍ້ຂອງກອງປະຊຸມໂຕະມົນປະຈໍາປີ 2018

"ການສະຫຼຸກກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ **VIII** - ຄວາມຄືບໜ້າໃນການຈັດຕັ້ງຜັນຂະຫຍາຍເປົ້າໝາຍເປົ້າໝາຍການພັດທະນາແບບຍືນຍົງ ແລະ ການຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນ**"**.

## 2.3 ການປຶກສາຫາລື, ຮູບແບບ, ສະຖານທີ່ ແລະ ປະເດັນຕ່າງໆທີ່ກ່ຽວຂ້ອງ

ເພື່ອຮັບປະກັນໃຫ້ວຽກງານທີ່ໄດ້ເລີ່ມຈັດຕັ້ງປະຕິບັດໃນໄລຍະທີ່ຜ່ານມາໃຫ້ມີຄວາມຕໍ່ເນື່ອງ, ສິ່ງທີ່ສໍາຄັນແມ່ນການກໍານົດຫົວຂໍ້ຂອງກອງປະຊຸມໂຕະມົນປະຈໍາປີ 2018 ໄວ້ແຕ່ຫົວທີ ເນື່ອງຈາກວ່າກິດຈະກໍາຕົ້ນຕໍທີ່ໄດ້ຈັດຕັ້ງປະຕິບັດມາແລ້ວໃນປີ 2018 ປະກອບມີ: ການກະກຽມບົດປະເມີນຄວາມຄືບໜ້າການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງແຫ່ງຊາດແບບສະໝັກໃຈ (SDG VNR), ການກະກຽມໃສ່ການປະເມີນການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ (LDC Review), ການສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ VIII (MTR of the 8th NSEDP), "ປີທ່ອງທ່ຽວລາວ" 2018 ແລະ ການສໍາຫຼວດການຈັດຕັ້ງປະຕິບັດ VDCAP ແລະ ການສໍາຫຼວດຂອງສາກົນ ກ່ຽວກັບການເປັນຄູ່ຮ່ວມສໍາລັບການຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນ. ດັ່ງນັ້ນ, ປະເດັນຫົວຂໍ້ລຸ່ມນີ້ຈຶ່ງໄດ້ຖືກກໍານົດຂຶ້ນເພື່ອຮັບປະກັນໃຫ້ມີຜົນສໍາເລັດຢ່າງຕໍ່ເນື່ອງ:

### 2.3.1. ປະເດັນຈຸດສຸມ ສໍາລັບການສົນທະນາໃນກອງປະຊຸມໂຕະມົນ

ເນື້ອໃນປະເດັນຈຸດສຸມ ແລະ ບູລິມະສິດຕົ້ນຕໍ ສໍາລັບການສົນທະນາປຶກສາຫາລືໃນກອງປະຊຸມໂຕະມົນປະຈໍາປີ 2018 ແມ່ນຈະອີງໃສ່ຜົນຂອງການສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ VIII ເປັນຫຼັກ:

**ການສົນທະນາໃນກອງປະຊຸມໂຕະມົນ**

- ຜົນການສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ໂດຍສະເພາະກ່ຽວກັບບົດຮຽນທີ່ຖອດຖອນໄດ້ ແລະ ຂໍ້ສະເໜີແນະຕ່າງໆສໍາລັບການສ້າງແຜນໃນຕໍ່ໜ້າ

**ຂົງເຂດ/ປະເດັນຕົ້ນຕໍ ສໍາລັບການສົນທະນາ ກ່ອນຮອດກອງປະຊຸມໂຕະມົນ**

- ປະເດັນສະເພາະທີ່ປົ່ນອ້ອມຂະແໜງການ ແມ່ນສາມາດປຶກສາຫາລືກັນຢູ່ຂັ້ນໜ່ວຍງານຂະແໜງການ ແລະ ຫຼັງຈາກນັ້ນນໍາຜົນຂອງການປຶກສາຫາລືໄປລາຍງານຢູ່ໃນກອງປະຊຸມໂຕະມົນ ຊຶ່ງປະເດັນທີ່ໄດ້ປຶກສາຫາລືກັນຢູ່ຂັ້ນຂະແໜງການດັ່ງກ່າວ ຈະຖືກສັງລວມໄວ້ໃນເອກະສານພື້ນຖານຮັບໃຊ້ກອງປະຊຸມໂຕະມົນ (Background Document).

- ຄວາມຄືບໜ້າໃນການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ແລະ ຜົນການປະເມີນການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ
- ຜົນການທົບທວນການຈັດຕັ້ງປະຕິບັດແຜນດຳເນີນງານຖະແຫຼງການວຽງຈັນ ທີ່ສອດຄ່ອງກັບການສຳຫຼວດຂອງສາກົນຄັ້ງທີ່3 ກ່ຽວກັບການເປັນຄູ່ຮ່ວມສຳລັບການຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນ
- ທຶນຮອນສຳລັບການພັດທະນາ ແລະ ການຄຸ້ມຄອງການເງິນພາກລັດ: ສະພາບລວມດ້ານການເງິນໃນໄລຍະການສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ VIII ຊຶ່ງກວມເອົາການລົງທຶນຈາກທັງພາກລັດ ແລະ ເອກະຊົນ (ພາຍໃນ ແລະ ຕ່າງປະເທດ). ພ້ອມກັນນີ້, ກໍ່ອາດປຶກສາຫາລືກັນກ່ຽວກັບການທົບທວນການຈັດຕັ້ງປະຕິບັດບັນດາວຽກງານຈົນຮອດປະຈຸບັນ ລວມທັງການຄາດຄະເນຄວາມຕ້ອງການ ສຳລັບໄລຍະທ້າຍສະໄໝຂອງແຜນ. ສ່ວນການເງິນພາກລັດ ແມ່ນອາດປຶກສາຫາລືກ່ຽວກັບປະເດັນຕ່າງໆທີ່ກ່ຽວຂ້ອງ ເປັນຕົ້ນ ໃນຂອບເສດຖະກິດມະຫາພາກ, ງົບປະມານແຫ່ງຊາດ, ການປະຕິຮູບທາງດ້ານອາກອນ ແລະ ເພີ່ມຖານລາຍຮັບ. ອີກຢ່າງໜຶ່ງ, ກໍ່ອາດຈະລາຍງານຜົນສຳເລັດຕົ້ນຕໍຂອງລັດຖະບານໃນວຽກງານດ້ານຄວາມໂປ່ງໃສ ແລະ ການຕ້ານການສໍ້ລາດບັງຫຼວງ. ສຳລັບການປະກອບສ່ວນຂອງພາກເອກະຊົນ, ອາດປຶກສາຫາລືກ່ຽວກັບບໍລິມາດຂອງການລົງທຶນ ແລະ ຄາດຄະເນໃນຕໍ່ໜ້າ.

### 2.3.2. ສະຖານທີ່ຈັດກອງປະຊຸມໂຕະມົນ

ກອງປະຊຸມໂຕະມົນປະຈຳປີ 2018 ແມ່ນຈະໄດ້ຈັດຂຶ້ນເປັນເວລາ 02 ວັນເຕັມ ທີ່ນະຄອນຫຼວງວຽງຈັນ ຊຶ່ງມື້ທີ່1 ແມ່ນກອງປະຊຸມປຶກສາຫາລືລະດັບວິຊາການ ແລະ ມື້ທີ່2 ແມ່ນກອງປະຊຸມລະດັບນະໂຍບາຍ ຊຶ່ງແມ່ນກອງປະຊຸມໂຕະມົນຕົວຈິງ.

### 2.3.3. ການລົງຢ້ຽມຢາມພາກສະໜາມ ກ່ອນກອງປະຊຸມໂຕະມົນ

ການລົງຢ້ຽມຢາມໂຄງການພາກສະໜາມ ຈະໄດ້ຈັດຂຶ້ນກ່ອນກອງປະຊຸມໂຕະມົນປະມານ 2-3 ອາທິດ ໂດຍປະສານສົມທົບກັບອຳນາດການປົກຄອງແຂວງ ພ້ອມທັງຊຸກຍູ້ໃຫ້ບັນດາໜ່ວຍງານຂະແໜງການເປັນເຈົ້າການໃນການນຳພາ ແລະ ກຳນົດແຜນການລົງຢ້ຽມຢາມໂຄງການພາກສະໜາມດັ່ງກ່າວ ຊຶ່ງແຜນງານ/ໂຄງການທີ່ຈະລົງຢ້ຽມຢາມນັ້ນ ອາດປະກອບດ້ວຍໂຄງການຊ່ວຍເຫຼືອເພື່ອການພັດທະນາ (ODA), ໂຄງການລົງທຶນຂອງລັດ (PIP), ໂຄງການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ (PPP), ໂຄງການຮ່ວມມືແບບໃຕ້-ໃຕ້ ແລະ ຮ່ວມມືແບບສາມຫຼ່ຽມ (SSC/TC) ແລະ ໂຄງການອື່ນໆທີ່ຕິດພັນກັບຫົວຂໍ້ກອງປະຊຸມ. ວັນເວລາ ແລະ ສະຖານທີ່ ຂອງການລົງຢ້ຽມຢາມ ຈະໄດ້ແຈ້ງໃຫ້ຊາບຕາມພາຍຫຼັງ.

### 2.3.4. ໂຄງສ້າງ ແລະ ຮູບແບບຂອງການສົນທະນາປຶກສາຫາລືໃນກອງປະຊຸມໂຕະມົນ

**<u>ມື້ທີ່1: ກອງປະຊຸມປຶກສາຫາລືລະດັບວິຊາການ</u>**

**ສຳລັບພາກເຊົ້າ**

1. ພາກກ່າວເປີດກອງປະຊຸມ
2. ແບ່ງເປັນກຸ່ມສົນທະນາ ກ່ຽວກັບປະເດັນຈຸດສຸມຕ່າງໆ ໂດຍມີຄະນະນຳພາສົນທະນາ

| **ກຸ່ມ 1**<br>ໝາກຜົນ1<br>ຂອງແຜນ VIII | **ກຸ່ມ 2**<br>ໝາກຜົນ2<br>ຂອງແຜນ VIII | **ກຸ່ມ 3**<br>ໝາກຜົນ3<br>ຂອງແຜນ VIII | **ກຸ່ມ 4**<br>ປະເດັນປົ່ນອ້ອມ<br>ຂອງແຜນ VIII |
|---|---|---|---|
| **ຂົງເຂດ/ປະເດັນຈຸດສຸມຕົ້ນຕໍ ສຳລັບການສົນທະນາ**<br>1. ບູລິມະສິດ, ສິ່ງທ້າທາຍ, ມາດຕະການ ແລະ ວິທີການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ່ VIII ສຳລັບໄລຍະເວລາທ້າຍສະໄໝ, ລວມທັງການກຳນົດຈຸດສຸມ ແລະ ບູລິມະສິດ ສຳລັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ່ IX<br>2. ການສະໜັບສະໜູນ ຈາກທຸກພາກສ່ວນ ບໍ່ວ່າຈະເປັນດ້ານວິຊາການ ກໍ່ຄືດ້ານທຶນຮອນ ແລະ ການສະໜັບສະໜູນຮູບແບບອື່ນໆ ສຳລັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ່ VIII ໃນໄລຍະທ້າຍສະໄໝ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ່ IX<br><br>**ເອກະສານຕ່າງໆທີ່ນຳໃຊ້ໃນການສົນທະນາ**<br>1. ບົດສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ່ VIII<br>2. ບົດລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງແຫ່ງຊາດແບບສະໝັກໃຈ ໃນປີ 2018<br>3. ບົດລາຍງານການທົບທວນການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ຂອງຄະນະກຳມະການນະໂຍບາຍການພັດທະນາ ໃນປີ 2018<br>4. ເອກະສານພື້ນຖານຮັບໃຊ້ກອງປະຊຸມໂຕະມົນປະຈຳປີ 2018. | | | |

3. ຮັບປະທານອາຫານທ່ຽງ

**ສຳລັບພາກບ່າຍ**

4. ສົນທະນາປະກອບຄຳເຫັນ ສຳລັບແຕ່ລະກຸ່ມສົນທະນາ (ການຜັນຂະຫຍາຍເປົ້າໝາຍການພັດທະນາແບບຍືນຍົງ ແລະ ການກະກຽມ ແລະໄລຍະຂ້າມຜ່ານສຳລັບການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ : ການພິຈາລະນາ ແລະ ຜົນທີ່ອາດຕາມມາ ສຳລັບການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ່ IX)
5. ເປີດງານວາງສະແດງຜົນໄດ້ຮັບຈາກການຮ່ວມມືເພື່ອການພັດທະນາ
6. ພັກຜ່ອນດື່ມນ້ຳຊາ-ກາເຟ
7. ງານລ້ຽງອາຫານຄ່ຳ

**<u>ມື້ທີ່2: ກອງປະຊຸມປຶກສາຫາລືລະດັບນະໂຍບາຍ</u>**

**ສຳລັບພາກເຊົ້າ :**

1. ພິທີກ່າວເປີດ ແລະ ກ່າວມີຄຳເຫັນ ຕໍ່ກອງປະຊຸມໂຕະມົນປະຈຳປີ 2018
2. ພັກຜ່ອນດື່ມນ້ຳຊາ-ກາເຟ

3. ລາຍງານຜົນຂອງການສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ່ VIII : ສະຫຼຸບຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ໝາກຜົນທີ່ 1 (Outcome 1) ໂດຍສັງເຂບ ໂດຍສະເພາະຄວາມຄືບໜ້າຂອງການເຕີບໂຕດ້ານເສດຖະກິດແບບສົມສ່ວນ ແລະ ຍືນຍົງ
4. ສົນທະນາ ແລະ ປະກອບຄຳເຫັນ
5. ລາຍງານຜົນຂອງການສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ່ VIII : ສະຫຼຸບຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ໝາກຜົນທີ່ 2 (Outcome 2) ໂດຍສັງເຂບ ໂດຍສະເພາະຄວາມຄືບໜ້າຂອງການພັດທະນາດ້ານສັງຄົມ ແລະ ຊັບພະຍາກອນມະນຸດ
6. ສົນທະນາ ແລະ ປະກອບຄຳເຫັນ
7. ຮັບປະທານອາຫານທ່ຽງ

**ສຳລັບພາກບ່າຍ :**

8. ລາຍງານຜົນຂອງການສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ່ VIII : ສະຫຼຸບຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ໝາກຜົນທີ່ 3 (Outcome 3) ໂດຍສັງເຂບ ໂດຍສະເພາະຄວາມຄືບໜ້າຂອງການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
9. ສົນທະນາ ແລະ ປະກອບຄຳເຫັນ
10. ລາຍງານຜົນຂອງການສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ່ VIII : ສະຫຼຸບຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ບັນດາປະເດັນປິ່ນອ້ອມໂດຍສັງເຂບ
11. ສົນທະນາ ແລະ ປະກອບຄຳເຫັນ
12. ພັກຜ່ອນດື່ມນ້ຳຊາ-ກາເຟ
13. ກ່າວມີຄຳເຫັນ ຕໍ່ກັບການຜັນຂະຫຍາຍເປົ້າໝາຍການພັດທະນາແບບຍືນຍົງ ແລະ ການກະກຽມແລະໄລຍະຂ້າມຜ່ານສຳລັບການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ : ການພິຈາລະນາ ແລະ ຜົນທີ່ອາດຕາມມາ ສຳລັບການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ່ IX
14. ສົນທະນາ ແລະ ປະກອບຄຳເຫັນ
15. ພິທີກ່າວສະຫຼຸບ ແລະ ປິດກອງປະຊຸມຢ່າງເປັນທາງການ
16. ພິທີຖະແຫຼງຂ່າວ ເພື່ອແຈ້ງຜົນຂອງກອງປະຊຸມໂຕະມົນປະຈຳປີ 2018

# III. ການສົນທະນາ, ປຶກສາຫາລື ແລະ ປະສານງານ ຢູ່ໃນລະດັບ ໜ່ວຍງານຂະແໜງການ

## 3.1 ແຜນວຽກທີ່ເລັ່ງໃສ່ໝາກຜົນ

ແນະນໍາໃຫ້ທຸກໜ່ວຍງານຂະແໜງການ ສ້າງແຜນວຽກຂອງຂະແໜງຕົນທີ່ອີງໃສ່ເປົ້າໝາຍໃຫຍ່ທີ່ຕ້ອງການຈະບັນລຸ. ເພື່ອປະຕິບັດໄດ້ຄືດັ່ງກ່າວ ແມ່ນຕ້ອງໄດ້ມີການກໍານົດໜ້າວຽກ/ກິດຈະກໍາ/ຄວາມຄິດລິເລີ່ມ ເຊິ່ງຈະປະກອບສ່ວນເຮັດໃຫ້ບັນລຸບັນດາເປົ້າໝາຍໃຫຍ່ ແລະ ໜ້າວຽກຈຸດສຸມໄດ້ (ບາງສ່ວນແມ່ນໄດ້ອະທິບາຍຢູ່ໃນຂໍ້ i) ຂອບຕິດຕາມ-ປະເມີນຜົນຂອງແຜນ 5 ປີ ຄັ້ງທີ VIII, ii) ຕົວຊີ້ວັດ SDGs, ແລະ iii) ຂໍ້ສະເໜີແນະດ້ານນະໂຍບາຍຈາກກອງປະຊຸມໂຕະມົນປະຈໍາປີ.

## 3.2 ຂອບໜ້າວຽກສະບັບປັບປຸງ

ຂອບໜ້າວຽກຂອງໜ່ວຍງານຂະແໜງການ ແມ່ນຕ້ອງໄດ້ແນໃສ່ບັນລຸບັນດາໝາກຜົນຕ່າງໆຂອງຂະແໜງການ. ພ້ອມນີ້, ຂອບໜ້າວຽກຕ້ອງມີເນື້ອໃນສັ້ນກະທັດຮັດ ແລະ ຈະແຈ້ງວ່າ ໜ່ວຍງານຂະແໜງການຈະປະກອບສ່ວນເຂົ້າໃນການບັນລຸໝາກຜົນໃນລະດັບຊາດຄືແນວໃດ. ເຊິ່ງໝາກຜົນທີ່ຈະຕ້ອງບັນລຸອາດປະກອບມີບັນດາບົດລາຍງານໃນຫົວຂໍ້ໃດໜຶ່ງ, ຂະແໜງການ (ຍ່ອຍ) ຫຼື ຍຸດທະສາດຂອງຂະແໜງການ, ສ້າງຄວາມເຂົ້າໃຈຮ່ວມກັນໃນການແກ້ໄຂບັນຫາສະເພາະທີ່ຕິດພັນກັບຂະແໜງການ ຫຼື ບົດລາຍງານເພື່ອສະເໜີໃຫ້ຂັ້ນເທິງພິຈາລະນາ. ຄາດຄະເນຜົນໄດ້ຮັບຂອງແຕ່ລະໜ່ວຍງານຂະແໜງການ ແມ່ນຕ້ອງສອດຄ່ອງກັບແຜນການຕິດຕາມຄວາມຄືບໜ້າໃນການຈັດຕັ້ງຜັນຂະຫຍາຍຜົນຂອງກອງປະຊຸມໂຕະມົນລະດັບສູງ ກໍ່ຄືກອງປະຊຸມໂຕະມົນປະຈໍາປີ. ເວົ້າລວມແລ້ວ, ໜ່ວຍງານຂະແໜງການ ຈະຕ້ອງລາຍງານຜົນສໍາເລັດ ໃນການຈັດຕັ້ງປະຕິບັດວຽກງານຂອງຂະແໜງການອີງຕາມເປົ້າໝາຍໃຫຍ່ທີ່ຕິດພັນກັບຂະແໜງການຕົນ.

## 3.3 ແຜນການຈັດກິດຈະກໍາຕ່າງໆ

ຕ້ອງແຈ້ງໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຊາບກ່ຽວກັບຕາຕະລາງເວລາ ສໍາລັບ ການຈັດປະຊຸມໂຕະມົນລະດັບສູງ ຫຼື ກອງປະຊຸມໂຕະມົນປະຈໍາປີ ລວມທັງກອງປະຊຸມລະລັບຕ່າງໆ ຂອງບັນດາໜ່ວຍງານຂະແໜງການ ທີ່ຈະໄດ້ຈັດຂຶ້ນພາຍໃນປີ. ຕາຕະລາງເວລາດັ່ງກ່າວຈະຊ່ວຍເຮັດໃຫ້ທຸກພາກສ່ວນສາມາດຄາດຄະເນ ແລະ ສື່ສານເຊິ່ງກັນແລະກັນ ພ້ອມທັງຊ່ວຍກໍານົດໜ້າວຽກຈຸດສຸມເພື່ອບັນລຸໝາກຜົນທີ່ກໍານົດໄວ້ຢ່າງມີປະສິດທິຜົນ. ເພື່ອຊ່ວຍອໍານວຍຄວາມສະດວກໃຫ້ແກ່ວຽກງານດັ່ງກ່າວ, ບົດແນະນໍາສະບັບນີ້ ໄດ້ກໍານົດໄວ້ໃນພາກທີ IV. ຊຶ່ງຮຽກຮ້ອງໃຫ້ບັນດາໜ່ວຍງານຂະແໜງການ ສົ່ງແຜນການຈັດກິດຈະກໍາຕ່າງໆ ໃຫ້ ກົມຮ່ວມມືສາກົນ (ກະຊວງແຜນການ ແລະ ການລົງທຶນ) ເປັນປະຈໍາແຕ່ລະໄຕມາດ. ລາຍລະອຽດຈະໄດ້ເອົາລົງເວັບໄຊຂອງຂະບວນການໂຕະມົນ: https://rtm.org.la/.

## 3.4 ການຈັດກອງປະຊຸມລະດັບຕ່າງໆ ຂອງໜ່ວຍງານຂະແໜງການ ແລະ ປະເດັນສໍາຄັນທີ່ຈະນໍາໄປປຶກສາຫາລືກັນ ໃນກອງປະຊຸມໂຕະມົນລະດັບສູງ 2018

ຮຽກຮ້ອງໃຫ້ທຸກໜ່ວຍງານຂະແໜງການ ຕ້ອງໄດ້ຈັດ ກອງປະຊຸມປຶກສາຫາລືພາຍໃນຂະແໜງການຕົນ ລວມທັງຈັດຕັ້ງປະຕິບັດບັນດາກິດຈະກໍາທີ່ສໍາຄັນຕ່າງໆ. ໃນຂະນະທີ່ ການປຶກສາຫາລື ກ່ຽວກັບປະເດັນທີ່ຕິດພັນກັບຂະແໜງການ ມີຄວາມສໍາຄັນ, ກອງເລຂາຄະນະຊີ້ນໍາລະດັບຊາດເພື່ອຂະບວນການໂຕະມົນ

ແນະນຳໃຫ້ ແຕ່ລະໜ່ວຍງານຂະແໜງການ ຄົ້ນຄວ້າກຳນົດປະເດັນສຳຄັນຂອງຂະແໜງການ ເພື່ອນຳໄປປຶກສາຫາລືກັນ ຢູ່ໃນກອງປະຊຸມໂຕະມົນລະດັບສູງ 2018.

### 3.5 ກອງເລຂາຂະບວນການໂຕະມົນ ພົບປະກັບກອງເລຂາຂອງບັນດາໜ່ວຍງານຂະແໜງການ

ຕ້ອງໄດ້ປັບປຸງ "ການປຶກສາຫາລືດ້ານນະໂຍບາຍ" ໃຫ້ມີຄວາມເຂັ້ມແຂງຂຶ້ນຕື່ມໃນການຈັດປະຊຸມຂອງໜ່ວຍງານຂະແໜງການ, ເຊິ່ງບໍ່ຈຳເປັນຈະຕ້ອງຈຳກັດການປຶກສາຫາລືໃຫ້ຢູ່ໃນກອບຂອງຂະບວນການ, ບົດກ່າວ ແລະ ຂັ້ນຕອນເທົ່ານັ້ນ. ຕໍ່ກັບບັນຫານີ້, ແມ່ນຮຽກຮ້ອງໃຫ້ບັນດາກອງເລຂາຂອງແຕ່ລະໜ່ວຍງານຂະແໜງການເພີ່ມຄວາມເປັນເຈົ້າການໃຫ້ຫຼາຍຂຶ້ນກວ່າເກົ່າ. ເພື່ອຊ່ວຍອຳນວຍຄວາມສະດວກດ້ານການປະສານງານ ລະຫວ່າງ ຂະແໜງການຕ່າງໆ ແລະ ສ້າງຄວາມເຂົ້າໃຈທີ່ເປັນເອກະພາບກັນ ກ່ຽວກັບການກະກຽມກອງປະຊຸມໂຕະມົນລະດັບສູງ, ກົມຮ່ວມມືສາກົນ/ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນ ມີຈຸດປະສົງໄປພົບປະກັບກອງເລຂາຂອງແຕ່ລະໜ່ວຍງານຂະແໜງການ (ຜູ້ປະສານງານ ຈາກກະຊວງຂະແໜງການທີ່ເປັນປະທານ ແລະ ຄູ່ຮ່ວມພັດທະນາທີ່ເປັນປະທານຮ່ວມ). ເຊິ່ງໃນການປັບປຸງການປະສານງານໃຫ້ດີຂຶ້ນກວ່າເກົ່າ ແມ່ນຈະໄດ້ສົ່ງໜັງສືຂໍນັດພົບກ່ອນລ່ວງໜ້າ.

### 3.6 ກອງປະຊຸມປະທານ ແລະ ປະທານຮ່ວມຂອງໜ່ວຍງານຂະແໜງການເພື່ອປຶກສາຫາລືກັບຜູ້ໃຫ້ທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ

ກົມຮ່ວມມືສາກົນ ຈະໄດ້ຈັດກອງປະຊຸມປະທານ ແລະ ປະທານຮ່ວມຂອງໜ່ວຍງານຂະແໜງການເພື່ອປຶກສາຫາລືກັບຜູ້ໃຫ້ທຶນ ຢ່າງເປັນປົກກະຕິ ກ່ອນຮອດ ກອງປະຊຸມໂຕະມົນລະດັບສູງ 2018. ກອງປະຊຸມດັ່ງກ່າວ ຈະໄດ້ສຸມໃສ່ປຶກສາຫາລື ກ່ຽວກັບຄວາມຄືບໜ້າໃນການກະກຽມກອງປະຊຸມໂຕະມົນລະດັບສູງ 2018 ແລະ ປຶກສາຫາລືກ່ຽວກັບບັນຫາຕົ້ນຕໍທີ່ຕ້ອງການຄວາມກະຈ່າງແຈ້ງ ແລະ ສ້າງຄວາມເຂົ້າໃຈທີ່ເປັນເອກະພາບກັນ.

### 3.7 ງານວາງສະແດງ ຜົນສຳເລັດ ຂອງວຽກງານການຮ່ວມມືເພື່ອການພັດທະນາ

ງານວາງສະແດງ ແມ່ນຈະໄດ້ຈັດຂຶ້ນໄປຄຽງຄູ່ກັບກອງປະຊຸມໂຕະມົນລະດັບສູງ 2018 ເຊິ່ງຈະໄດ້ເຊີນທຸກໜ່ວຍງານຂະແໜງການ ເຂົ້າຮ່ວມວາງສະແດງຜົນສຳເລັດໃນການຈັດຕັ້ງປະຕິບັດກິດຈະກຳຂອງຂະແໜງຕົນ ເພື່ອປະກອບສ່ວນເຂົ້າໃນການພັດທະນາແບບຍືນຍົງ ແລະ ການເຕີບໂຕແບບສົມສ່ວນ.

ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນ ຈະໄດ້ຈັດປະຊຸມເພື່ອແນະນຳບັນດາໜ່ວຍງານຂະແໜງການ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຢ່າງໜ້ອຍ 1 ເດືອນກ່ອນກອງປະຊຸມໂຕະມົນລະດັບສູງ 2018 ເພື່ອແນະນຳລະອຽດ ກ່ຽວກັບການກະກຽມຈັດງານວາງສະແດງດັ່ງກ່າວ.

### 3.8 ການລົງຢ້ຽມຢາມພາກສະໜາມ ກ່ອນກອງປະຊຸມໂຕະມົນ

ຊຸກຍູ້ໃຫ້ໜ່ວຍງານຂະແໜງການເປັນເຈົ້າການ ກະກຽມແລະຈັດການລົງຢ້ຽມຢາມພາກສະໜາມທີ່ຕິດພັນກັບເນື້ອໃນຂອງກອງປະຊຸມໂຕະມົນປະຈຳປີ 2018. ດັ່ງທີ່ໄດ້ກ່າວມາໃນເບື້ອງຕົ້ນ, ການລົງຢ້ຽມຢາມພາກສະໜາມ ຈະຢ້ຽມຢາມແຜນງານໂຄງການຫຼາຍປະເພດ ເຊັ່ນ: ແຜນງານໂຄງການຊ່ວຍເຫຼືອເພື່ອການພັດທະນາ, ໂຄງການລົງທຶນຂອງລັດ, ໂຄງການຮ່ວມມືລະຫວ່າງພາກລັດ-ເອກະຊົນ ແລະ ໂຄງການການຮ່ວມມືແບບໃຕ້-ໃຕ້ ແລະ ແບບສາມຫຼ່ຽມ ແລະ ອື່ນໆທີ່ເຫັນວ່າແທດເໝາະ. ການລົງຢ້ຽມຢາມດັ່ງກ່າວ ຄວນຈັດຂຶ້ນກ່ອນກອງປະຊຸມໂຕະມົນ ຢ່າງໜ້ອຍ 01 ເດືອນລ່ວງໜ້າ ຊຶ່ງກອງເລຂາຂະບວນ

ການໂຕະມົນຈະໄດ້ສົ່ງໜັງສືທາງການຫາບັນດາໜ່ວຍງານຂະແໜງການເພື່ອແຈ້ງກ່ຽວກັບເນື້ອໃນ ແລະ ຂະບວນການໃນການຈັດການລົງຢ້ຽມຢາມດັ່ງກ່າວ ໂດຍສະເພາະຈະປຶກສາຫາລື ກ່ຽວກັບການກຳນົດເອົາບັນດາໜ່ວຍງານຂະແໜງການໃຫ້ນຳພາການລົງຢ້ຽມຢາມພາກສະໜາມໃນປີນີ້.

## IV. ບັນດາກິດຈະກຳ ແລະ ກອງປະຊຸມປຶກສາຫາລືຕ່າງໆທີ່ສຳຄັນ ເພື່ອກະກຽມໃສ່ກອງປະຊຸມໂຕະມົນປະຈຳປີ 2018

### 4.1 ແຜນກິດຈະກຳ ແລະ ກຳນົດເວລາ

| ກິດຈະກຳຕົ້ນຕໍ | ກຳນົດເວລາ 2018 | ພາກສ່ວນ ຮັບຜິດຊອບ |
|---|---|---|
| 1. ກະກຽມປະກອບຂໍ້ມູນໃຫ້ແກ່ການສຳຫຼວດກ່ຽວກັບ ຄວາມຮັບຜິດຊອບຮ່ວມກັນ | ມັງກອນ | ກົມຮ່ວມມືສາກົນ, ກຜທ |
| 2. ສ້າງແຜນການ ແລະ ບົດແນະນຳ ໃນການກະກຽມກອງ ປະຊຸມໂຕະມົນປະຈຳປີ 2018 | ມັງກອນ | ກົມຮ່ວມມືສາກົນ, ກຜທ |
| 3. ການເຜີຍແຜ່ແຈ້ງການຂອງຫ້ອງວ່າການ ສນຍ ວ່າດ້ວຍ ການຈັດຕັ້ງຜັນຂະຫຍາຍຜົນຂອງກອງປະຊຸມໂຕະມົນປະ ຈຳປີ 2017 | ກຸມພາ-ມີນາ | ກົມຮ່ວມມືສາກົນ, ກຜທ |
| 4. ກະກຽມສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນ ພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ VIII ໄປຄຽງຄູ່ກັນກັບ ການໂຄສະນາ ປີທ່ອງທ່ຽວລາວ | ມັງກອນ-ກັນຍາ | ກົມແຜນການ, ກຜທ |
| 5. ກະກຽມໃສ່ການປະເມີນສະຖານະພາບປະເທດດ້ອຍ ພັດທະນາ ພ້ອມທັງຕິດຕາມຄວາມຄືບໜ້າ | ມັງກອນ-ມີນາ (ທົບທວນ) ແລະ ພຶດສະພາ-ທັນວາ (ຕິດຕາມ ແລະ ກຳນົດທິດທາງແຜນການໃນຕໍ່ໜ້າ) | ກົມແຜນການ, ສູນສະຖິຕິແຫ່ງຊາດ, ກົມຮ່ວມມືສາກົນ (ກຜທ) ກົມອົງການຈັດຕັ້ງສາກົນ (ຕປທ) |
| 6. ພິບປະນັກຂ່າວ | ທຸກໆໄຕມາດ ຖ້າເຮັດໄດ້ | ກົມຮ່ວມມືສາກົນ, ກຜທ |
| 7. ກະກຽມສ້າງບົດປະເມີນຄວາມຄືບໜ້າຂອງການຈັດຕັ້ງ ປະຕິບັດ SDGs ແຫ່ງຊາດແບບສະໝັກໃຈ (ຂໍ້ມູນ ລະອຽດ ເບິ່ງໄດ້ຢູ່ແຜນວຽກຂອງການປະເມີນຄວາມຄືບ ໜ້າຂອງການຈັດຕັ້ງປະຕິບັດ SDGs ແບບສະໝັກໃຈ) | ມັງກອນ-ກໍລະກົດ | ກົມອົງການຈັດຕັ້ງສາກົນ (ກຊ ຕປທ) |

| ກິດຈະກຳຕົ້ນຕໍ | ກຳນົດເວລາ 2018 | ພາກສ່ວນ ຮັບຜິດຊອບ |
|---|---|---|
| 8. ກອງປະຊຸມຂອງໜ່ວຍງານຂະແໜງການ (ລະດັບວິຊາການ - ລະດັບສູງ) | ພາຍໃນປີ | ກອງເລຂາໜ່ວຍງານຂະແໜງການ |
| 9. ສ້າງແຜນວຽກປະຈຳປີຂອງໜ່ວຍງານຂະແໜງການທີ່ອີງໃສ່ເປົ້າໝາຍໃຫຍ່ທີ່ຕ້ອງການບັນລຸ, ແຜນການຈັດກິດຈະກຳສຳຄັນຕ່າງໆ ແລະ ຂອບໜ້າວຽກສະບັບປັບປຸງ | ຕົ້ນເດືອນ ກຸມພາ | ກອງເລຂາໜ່ວຍງານຂະແໜງການ |
| 10. ກອງປະຊຸມປຶກສາຫາລື ກ່ຽວກັບວຽກງານຂະບວນການໂຕະມົນ (RTP Retreat) | ຕົ້ນເດືອນ ກຸມພາ | ກົມຮ່ວມມືສາກົນ, ກຜທ |
| 11. ກອງປະຊຸມຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນ | ເມສາ ແລະ ຕາມຄວາມຈຳເປັນ | ກົມຮ່ວມມືສາກົນ, ກຜທ |
| 12. ປັບປຸງບົດແນະນຳໃນການກະກຽມກອງປະຊຸມໂຕະມົນປະຈຳປີ 2018 ໃຫ້ເປັນສະບັບສຸດທ້າຍ | ມີນາ-ມິຖຸນາ | ກົມຮ່ວມມືສາກົນ, ກຜທ |
| 13. ເຜີຍແຜ່ບົດແນະນຳໃນການກະກຽມກອງປະຊຸມໂຕະມົນປະຈຳປີ 2018 ໃຫ້ແກ່ໜ່ວຍງານຂະແໜງການ ແລະ ພາກສ່ວນກ່ຽວຂ້ອງເພື່ອຊາບ ແລະ ກະກຽມ | ທ້າຍເດືອນມີນາ (ສະບັບຮ່າງ) ແລະຫຼັງຈາກນັ້ນ ພຶດສະພາ-ມິຖຸນາ (ສະບັບປັບປຸງຕາມທິດຊີ້ນຳຂອງຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນ) | ກົມຮ່ວມມືສາກົນ, ກຜທ |
| 14. ກອງປະຊຸມປຶກສາຫາລືຕ່າງໆກັບໜ່ວຍງານຂະແໜງການທີ່ຈະນຳພາການລົງຢ້ຽມຢາມພາກສະໜາມກ່ອນຮອດກອງປະຊຸມໂຕະມົນ | ຕາມຕ້ອງການ | ກົມຮ່ວມມືສາກົນ ແລະ ຕາງໜ້າແຂວງທີ່ກ່ຽວຂ້ອງ |
| 15. ກອງປະຊຸມເປີດໂຕການສຳຫຼວດຂອງສາກົນ ກ່ຽວກັບການເປັນຄູ່ຮ່ວມສຳລັບການຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນ ປະຈຳປີ 2018 (ໝາຍເຫດ: ຈັດຕັ້ງປະຕິບັດໄປຄຽງຄູ່ກັນກັບການສຳຫຼວດການຈັດຕັ້ງຕິບັດຖະແຫຼງການວຽງຈັນຄັ້ງທຳອິດ) | ພຶດສະພາ-ມິຖຸນາ | ກົມຮ່ວມມືສາກົນ, ກຜທ |
| 16. ກະກຽມຂໍ້ມູນພື້ນຖານເພື່ອການປະເມີນສະຖານະພາບປະເທດດ້ອຍພັດທະນາ 2018 (ຖ້າຈຳເປັນ) | ມິຖຸນາ-ສິງຫາ | ກົມອົງການຈັດຕັ້ງສາກົນ (ຕປທ), ກົມແຜນການ ແລະ ສູນສະຖິຕິ (ກຜທ) |
| 17. ກອງປະຊຸມເວທີການເມືອງລະດັບສູງ ກ່ຽວກັບ SDGs | 14-19 ກໍລະກົດ | ກົມອົງການຈັດຕັ້ງສາກົນ (ຕປທ) |
| 18. ກອງປະຊຸມປະທານ ແລະ ປະທານຮ່ວມຂອງໜ່ວຍງານ | ທຸກໆໄຕມາດ (ຫຼື ຫຼາຍ | ກົມຮ່ວມມືສາກົນ, |

| ກິດຈະກຳຕົ້ນຕໍ | ກຳນົດເວລາ 2018 | ພາກສ່ວນຮັບຜິດຊອບ |
|---|---|---|
| ຂະແໜງການເພື່ອປຶກສາຫາລືກັບຜູ້ໃຫ້ທຶນ (ລະດັບນະໂຍບາຍ) | ກວ່ານັ້ນອີງຕາມຄວາມຈຳເປັນ) | ກຜທ |
| 19. ຈັດກອງປະຊຸມລະຫວ່າງກອງເລຂາຂະບວນການໂຕະມົນ ແລະ ກອງເລຂາໜ່ວຍງານຂະແໜງການ (ລະດັບວິຊາການ) | ທຸກໆ 2 ເດືອນ | ກົມຮ່ວມມືສາກົນ, ກຜທ ແລະ ກອງເລຂາໜ່ວຍງານຂະແໜງການ |
| 20. ສ້າງບົດລາຍງານການຈັດຕັ້ງປະຕິບັດການຊ່ວຍເຫຼືອທາງການເພື່ອການພັດທະນາ, ແລະ ດຳເນີນການປະເມີນກາງສະໄໝການຈັດຕັ້ງປະຕິບັດ ຊ.ກ.ພ ເພື່ອປະກອບສ່ວນໃຫ້ແກ່ການສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນ VIII | ມັງກອນ-ຕຸລາ | ກົມຮ່ວມມືສາກົນ, ກຜທ |
| 21. ສົ່ງບັດເຊີນກອງປະຊຸມໂຕະມົນປະຈຳປີ 2018 | ຢ່າງໜ້ອຍ 2 ເດືອນກ່ອນກອງປະຊຸມໂຕະມົນປະຈຳປີ | ກົມຮ່ວມມືສາກົນ, ກຜທ |
| 22. ສ້າງເອກະສານພື້ນຖານຮັບໃຊ້ກອງປະຊຸມໂຕະມົນປະຈຳປີ 2018, ແລະ ສົ່ງອອກໃຫ້ບັນດາຜູ້ແທນກອງປະຊຸມເພື່ອເປັນຂໍ້ມູນ | ຢ່າງໜ້ອຍ 2 ອາທິດກ່ອນກອງປະຊຸມໂຕະມົນປະຈຳປີ | ກົມຮ່ວມມືສາກົນ, ກຜທ |
| 23. ຈັດກອງປະຊຸມປຶກສາຫາລືກັນກ່ອນຮອດກອງປະຊຸມໂຕະມົນ ກ່ຽວກັບການສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນ VIII ລວມທັງເປົ້າໝາຍການພັດທະນາແບບຍືນຍົງ ແລະ ການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ. (ສ່ວນກອງປະຊຸມປຶກສາຫາລືກັນກ່ອນກ່ຽວກັບຫົວຂໍ້ອື່ນໆທີ່ຕິດພັນກັບວາລະກອງປະຊຸມຈະໄດ້ຖືເອົາກອງປະຊຸມຂອງໜ່ວຍງານຂະແໜງການເປັນເວທີປຶກສາຫາລືເລີຍ (RTM Pre-Consultations) | ຢ່າງໜ້ອຍ 1-2 ເດືອນກ່ອນກອງປະຊຸມໂຕະມົນປະຈຳປີ (ກັນຍາ-ຕຸລາ) | ໜ່ວຍງານຂະແໜງການ, ກົມຮ່ວມມືສາກົນ, ກົມແຜນການ, ສູນສະຖິຕິແຫ່ງຊາດ (ກຜທ), ແລະ ກົມອົງການຈັດຕັ້ງສາກົນ (ກຕປທ) |
| 24. ຈັດກອງປະຊຸມໂຕະມົນປະຈຳປີ 2018 ແລະ ນຳພາຫົວໜ້າຄະນະຜູ້ແທນກອງປະຊຸມໂຕະມົນ ເຂົ້າຢ້ຽມຂໍ່ານັບທ່ານ ນາຍົກລັດຖະມົນຕີ ເພື່ອລາຍງານຜົນຂອງກອງປະຊຸມໂຕະມົນ | ທ້າຍເດືອນພະຈິກ ຫຼື ຕົ້ນເດືອນທັນວາ (ວັນເວລາຕົວຈິງ ຈະໄດ້ແຈ້ງໃຫ້ຊາບຕາມພາຍຫຼັງ) | ກົມຮ່ວມມືສາກົນ, ກຜທ |

ຂໍ້ມູນຫຼ້າສຸດກ່ຽວກັບແຜນກິດຈະກຳ, ການປຶກສາຫາລື ແລະ ວຽກງານອື່ນໆ ກ່ຽວກັບ ຂະບວນການໂຕະມົນ ລວມທັງໜ່ວຍງານຂະແໜງການ ແມ່ນຈະໄດ້ເຜີຍແຜ່ລົງໃນເວັບໄຊທ໌ຂອງຂະບວນການໂຕະມົນ (http://rtm.org.la) ຢ່າງເປັນປົກກະຕິ.

## 4.2 ຈຸດປະສານງານພາຍໃນກົມຮ່ວມມືສາກົນ (ກະຊວງແຜນການ ແລະ ການລົງທຶນ)

ຖ້າມີຂໍ້ສົນໃຈທີ່ຕິດພັນກັບການກະກຽມກອງປະຊຸມໂຕະມົນປະຈໍາປີ 2018, ກະລຸນາຕິດຕໍ່ພົວພັນເຖິງ:

1. **ທ່ານ ນ. ສີສົມບູນ ອຸນາວົງ**
   ຫົວໜ້າກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ (ກຜທ)
   ໂທ: +856-20-5551 4300
   ອີເມວ: osisomboun@yahoo.com

2. **ທ່ານ ນ. ສາຍໜອນຄໍາ ມັງໜໍ່ເມກ**
   ຮອງຫົວໜ້າກົມຮ່ວມມືສາກົນ, ກຜທ
   ໂທ: + 856-20-5564 6354
   ອີເມວ: mangnomeks@yahoo.com

3. **ທ່ານ ສີສົມພອນ ເພັດດາວເຮືອງ**
   ຮອງຫົວໜ້າກົມຮ່ວມມືສາກົນ, ກຜທ
   ໂທ: + 856-20-2803 7206
   ອີເມວ: sysomphorn.dic@gmail.com

4. **ທ່ານ ວັນເພັງ ແສງມະໂນທອງ**
   ຮອງຫົວໜ້າກົມຮ່ວມມືສາກົນ, ກຜທ
   ໂທ: + 856-20-5550 5764
   ອີເມວ: vanphengvp@gmail.com

5. **ທ່ານ ປອ. ອາລຸນຍາເດດ ຣາຊະພົນ**
   ຮອງຫົວໜ້າກົມຮ່ວມມືສາກົນ, ກຜທ
   ໂທ: +856-20-2223 7774
   ອີເມວ: arounyadeth@gmail.com

6. **ທ່ານ ມໍລະກົດ ວົງໄຊ**
   ຫົວໜ້າພະແນກອົງການຈັດຕັ້ງສາກົນ
   ກົມຮ່ວມມືສາກົນ, ກຜທ
   ໂທ: +856 20 2244 8892
   ອີເມວ: k_vongxay@hotmail.com

## ເອກະສານຊ້ອນທ້າຍ 1: ຂໍ້ສະເໜີແນະຕົ້ນຕໍຈາກກອງປະຊຸມໂຕະມົນປະຈໍາປີ 2017

### 1. ສະຫຼຸບການຈັດຕັ້ງປະຕິບັດແຜນ 5ປີ ຄັ້ງທີ VIII ແລະ ບູລິມະສິດສໍາລັບປີ 2018

- ຜູ້ເຂົ້າຮ່ວມໄດ້ນໍາສະເໜີ ແລະ ສົນທະນາກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນ 5ປີ ຄັ້ງທີ VIII ລວມທັງແຜນຂອງແຂວງຈໍາປາສັກ ແລະ ໄດ້ກໍານົດບູລິມະສິດໃນຕໍ່ໜ້າຮ່ວມກັນ. ໂດຍທົ່ວໄປແລ້ວ, ເຫັນວ່າການຈັດຕັ້ງປະຕິບັດແຜນເຫຼົ່ານີ້ ມີຄວາມຄືບໜ້າດີສົມຄວນນັບແຕ່ກອງປະຊຸມໂຕະມົນລະດັບສູງປີ 2015 ເປັນຕົ້ນມາ ແລະ ເຫັນວ່າ ສປປ ລາວ ໄດ້ມີການພັດທະນາໄປໃນທິດທາງທີ່ຖືກຕ້ອງ ຕາມທີ່ໄດ້ກໍານົດໄວ້ໃນແຜນ 5ປີ ຄັ້ງທີ VIII.

### 2. ການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະ ການເຊື່ອມສານ SDGs

- ຕໍ່ກັບວຽກງານການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ແລະ ການເຊື່ອມສານ SDGs, ເຊິ່ງເປັນໜຶ່ງໃນສີ່ບູລິມະສິດທີ່ຖືກກໍານົດຂຶ້ນໃນກອງປະຊຸມປີນີ້ ເຫັນວ່າຈະສາມາດບັນລຸໄດ້ຕາມເວລາທີ່ກໍານົດໄວ້.
- ສປປ ລາວ ຄາດວ່າຈະສາມາດບັນລຸເປົ້າໝາຍໃນການຫຼຸດພົ້ນໄດ້ ແລະ ໃນການຮັບປະກັນໃຫ້ປະເທດຫຼຸດພົ້ນອອກຈາກສະຖານະພາບນີ້ໄດ້ຢ່າງລ່ຽນໄຫຼ ໃນໄລຍະການຫັນປ່ຽນນັ້ນ ແມ່ນຍັງຮຽກຮ້ອງໃຫ້ມີການສະໜັບສະໜູນຈາກບັນດາຄູ່ຮ່ວມພັດທະນາ. ນອກຈາກໃນລະດັບຊາດແລ້ວ, ຄວາມຄືບໜ້າທາງດ້ານການເຊື່ອມສານ SDGs ແລະ ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນານີ້ ຍັງໄດ້ສະແດງອອກຢູ່ໃນລະດັບທ້ອງຖິ່ນເຊັ່ນກັນ ເຊິ່ງສະແດງອອກໃຫ້ເຫັນໃນເວລາລົງໄປຢ້ຽມຢາມໂຄງການພັດທະນາ 3 ແຫ່ງໃນແຂວງຈໍາປາສັກ.
- ຜູ້ເຂົ້າຮ່ວມຍັງໄດ້ຊີ້ໃຫ້ເຫັນວ່າ ເຖິງແມ່ນວ່າ ສປປ ລາວ ຈະສາມາດຫຼຸດພົ້ນໄດ້, ແຕ່ກໍ່ຍັງມີຄວາມສ່ຽງຫຼາຍຢ່າງ. ສະນັ້ນ, ໃນຂະນະທີ່ສືບຕໍ່ພັດທະນາເສດຖະກິດໃຫ້ມີການເຕີບໂຕຢ່າງໄວວາ ແລະ ຍືນຍົງແລ້ວນັ້ນ, ຍັງຕ້ອງໄດ້ຮັບປະກັນໃຫ້ຜົນປະໂຫຍດຈາກການເຕີບໂຕປະກອບສ່ວນເຂົ້າໃນການພັດທະນາຊັບພະຍາກອນມະນຸດ ແລະ ສ້າງສະຫວັດດີການສັງຄົມທີ່ດີໃຫ້ແກ່ປະຊາຊົນຢ່າງແທ້ຈິງ. ດັ່ງນັ້ນ, ການສຸມໃສ່ຊັບພະຍາກອນມະນຸດຈຶ່ງສໍາຄັນຫຼາຍ ໂດຍສຸມການລົງທຶນໃສ່ວຽກງານດ້ານໂພຊະນາການ ກໍ່ຄືດ້ານສາທາລະນະສຸກ ແລະ ການສຶກສາ.
- ພ້ອມນັ້ນ, ຜູ້ເຂົ້າຮ່ວມໄດ້ເນັ້ນໜັກໃຫ້ເຫັນວ່າການສືບຕໍ່ສຸມໃສ່ຜູ້ທຸກຍາກ, ຜູ້ທີ່ມີຄວາມສ່ຽງ ແລະ ອາໄສຢູ່ໃນຊົນນະບົດທີ່ຫ່າງໄກສອກຫຼີກໃຫ້ຫຼາຍກວ່າເກົ່ານັ້ນ ຈະກອບສ່ວນເຮັດໃຫ້ການພັດທະນາມີລັກສະນະຮອບດ້ານ ໂດຍກວມເອົາປະຊາຊົນລາວໃນທຸກຊົນເຜົ່າ. ຕິດພັນກັບຂົງເຂດດັ່ງກ່າວ, ບັນຫາດ້ານລະເບີດບໍ່ແຕກກໍ່ໄດ້ຖືກຍົກຂຶ້ນໃນກອງປະຊຸມ ເຊິ່ງໄດ້ມີການລາຍງານຜົນສໍາເລັດທີ່ໄດ້ຮັບຈາກການຮ່ວມມືກັນລະຫວ່າງລັດຖະບານ ແລະ ຄູ່ຮ່ວມພັດທະນາໃນການບັນລຸເປົ້າໝາຍ SDG 18.
- ກອງປະຊຸມໂຕະມົນຍັງໄດ້ຮັບກຽດເຂົ້າຮ່ວມໂດຍຊ່ຽວຊານອາວຸໂສຈາກອົງການສະຫະປະຊາຊາດເພື່ອການຄ້າ ແລະ ການພັດທະນາ, ເຊິ່ງໄດ້ຊີ້ໃຫ້ເຫັນວ່າ ສປປ ລາວ ໄດ້ມີນະໂຍບາຍທີ່ຖືກຕ້ອງແລ້ວ ແລະ ດ້ວຍເຫດນັ້ນຈຶ່ງເຮັດໃຫ້ມີຄວາມຄືບໜ້າຢ່າງຫຼວງຫຼາຍໃນການຫຼຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ. ຕໍ່ວຽກງານດັ່ງກ່າວ, ຜູ້ເຂົ້າຮ່ວມກໍ່ຈະລໍຖ້າການປະເມີນສະຖານະພາບປະເທດດ້ອຍພັດທະນາທີ່ຈະຈັດຂຶ້ນໂດຍຄະນະກໍາມາທິການດ້ານນະໂຍບາຍການພັດທະນາໃນປີ 2018 ຢ່າງໃຈຈົດໃຈຈໍ່.

### 3. ພາກເອກະຊົນ ແລະ ການເຕີບໂຕຂອງເສດຖະກິດ

- ສໍາລັບພາກເອກະຊົນ ແລະ ການເຕີບໂຕຂອງເສດຖະກິດ, ເຊິ່ງເປັນບູລິມະສິດທີສອງທີ່ໃນກອງປະຊຸມໂຕະມົນປະຈໍາປີກໍານົດຂຶ້ນ, ແມ່ນໄດ້ຕົກລົງເຫັນດີວ່າບົດບາດຂອງພາກເອກະຊົນຢູ່ໃນວຽກງານການເປັນ

ຄູ່ຮ່ວມເພື່ອການພັດທະນາແມ່ນສໍາຄັນທີ່ສຸດ. ເນື່ອງຈາກວ່າພາກເອກະຊົນເປັນຜູ້ສ້າງວຽກ, ປະກອບສ່ວນຫຼຸດຜ່ອນຄວາມທຸກຍາກ ແລະ ການເພີ່ມງົບປະມານຈາກພາຍໃນ ໂດຍຜ່ານສ່ວຍສາອາກອນ. ການເພີ່ມບົດບາດໃຫ້ແກ່ພາກເອກະຊົນຢູ່ໃນການສ້າງເສດຖະກິດໃຫ້ມີການເຕີບໂຕຢ່າງຮອບດ້ານ ແລະຍືນຍົງ ແລະ ຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນ ເປັນເປົ້າໝາຍສູງສຸດໃນທີ່ນີ້.

- ຜູ້ເຂົ້າຮ່ວມໄດ້ຍົກໃຫ້ເຫັນວ່າ ການມີຍຸດທະສາດພັດທະນາເສດຖະກິດໃຫ້ມີຄວາມຫຼາກຫຼາຍແມ່ນເປັນສິ່ງທີ່ຈໍາເປັນ, ໂດຍອີງໃສ່ຍຸດທະສາດການພັດທະນາມະນຸດແຫ່ງຊາດ ແລະ ການພັດທະນາສີມືແຮງງານເພື່ອໃຫ້ສອດຄ່ອງການຂະແໜງເສດຖະກິດຕົ້ນຕໍ ແລະ ເປົ້າໝາຍຂອງການສ້າງເສດຖະກິດໃຫ້ມີຄວາມຫຼາກຫຼາຍ.
- ບັນດາຄູ່ຮ່ວມພັດທະນາໄດ້ຍົກວ່າການຈັດຕັ້ງປະຕິບັດວຽກງານລັດແຫ່ງກົດໝາຍ, ເພີ່ມທະວີຄວາມໂປ່ງໃສ ແລະ ຄວາມແນ່ນອນທາງດ້ານລະບຽບການແມ່ນເປັນສິ່ງສໍາຄັນສໍາລັບນັກລົງທຶນທັງໝົດໃຫ້ສາມາດແຂ່ງຂັນກັນບົນພື້ນຖານຂອງຄວາມສະເໝີພາບ. ພ້ອມນັ້ນ ກໍ່ໄດ້ສະເໜີແນະໃຫ້ນໍາໃຊ້ວິທີການຄຸ້ມຄອງຂອງລັດຖະບານຢ່າງຮອບດ້ານ ໃນການສ້າງຄວາມເຂັ້ມແຂງ ແລະ ສ້າງແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ພາກເອກະຊົນ. ດັ່ງນັ້ນ, ການທີ່ລັດຖະບານສືບຕໍ່ປະຕິຮູບວຽກງານເຫຼົ່ານີ້ແມ່ນມີຄວາມສໍາຄັນທີ່ສຸດ ໂດຍມີການຖອດຖອນບົດຮຽນຈາກສາກົນ ແລະ ລະດົມຄໍາເຫັນຈາກການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງທັງໝົດ.

## 4. <u>ການພັດທະນາສີມືແຮງງານ ແລະ ການຝຶກອົບຮົມ</u>

- ດ້ານການສ້າງສີມືແຮງງານ ແລະ ການຝຶກອົບຮົມ, ເຊິ່ງເປັນຂົງເຂດບູລິມະສິດທີ 3, ແມ່ນໄດ້ມີການເນັ້ນໜັກເຖິງການສຸມທຶນຮອນໃສ່ການສ້າງສີມືແຮງງານ ແລະ ການຝຶກອົບຮົມ ເພື່ອປະກອບສ່ວນເຂົ້າໃນການພັດທະນາ ແລະ ການເຕີບໂຕໃນໄລຍະຍາວ, ດັ່ງທີ່ເຫັນໄດ້ຢູ່ໃນຫຼາຍໆປະເທດຢູ່ໃນພາກພື້ນ. ບັນດາຄູ່ຮ່ວມມີຄວາມຍິນດີໃນການສົມທົບກັບລັດຖະບານໃນການວາງແຜນການພັດທະນາສີມືແຮງງານ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງພາກເອກະຊົນ ແລະ ນໍາໃຊ້ກົນໄກການປຶກສາຫາລືກັບພາກເອກະຊົນທີ່ມີໃນປະຈຸບັນເພື່ອສົນທະນາກ່ຽວກັບບັນຫາດັ່ງກ່າວ.
- ແນະນໍາໃຫ້ມີການການເພີ່ມທະວີການປະສານງານ ແລະ ສ້າງຄວາມອາດສາມາດໃຫ້ແກ່ສະຖາບັນສະໜອງການຝຶກອົບຮົມ ໄປຄຽງຄູ່ກັນກັບການປັບປຸງຂໍ້ມູນ ແລະ ມີການວິເຄາະຕະຫຼາດແຮງງານ ເພື່ອເປັນພື້ນຖານໃຫ້ແກ່ການຕັດສິນໃຈທີ່ເປັນຮູບປະທໍາຫຼາຍຂຶ້ນ.
- ບັນດາແຜນງານການຝຶກອົບຮົມທີ່ສະໜອງໃຫ້ກຸ່ມຄົນທີ່ດ້ອຍໂອກາດ ແລະ ສາມາດປັບປ່ຽນໃຫ້ເຂົ້າກັບສີມືທີ່ແທດເໝາະກັບເຂົາເຈົ້າ ຈະຊ່ວຍຮັບປະກັນບໍ່ໃຫ້ມີຜູ້ໃດຖືກປະຖິ້ມໄວ້ຂ້າງຫຼັງ.
- ຄຽງຄູ່ກັບຜົນສໍາເລັດທາງດ້ານສາທາລະນະສຸກ ແລະ ການສຶກສາ, ກອງປະຊຸມໄດ້ເຫັນດີໃຫ້ຖືເອົາການຍົກລະດັບຄຸນນະພາບຂອງຄູ ແລະ ແພດໝໍເປັນບູລິມະສິດທີ່ຕ້ອງໄດ້ເອົາໃຈໃສ່.
- ພ້ອມນັ້ນ, ຜູ້ເຂົ້າຮ່ວມຈໍານວນຫຼາຍໄດ້ເນັ້ນໃຫ້ເຫັນເຖິງຄວາມສໍາຄັນຂອງການເລື່ອນຊັ້ນຂອງນັກຮຽນຊັ້ນປະຖົມໄປເປັນຊັ້ນມັດທະຍົມ. ຄວາມຈິງແລ້ວ, ແມ່ນຕ້ອງໄດ້ສຸມໃສ່ການເພີ່ມອັດຕາການລອດເຫຼືອຂອງເດັກຍິງ ເພື່ອເຮັດໃຫ້ເຂົາເຈົ້າມີທາງເລືອກໃນການດໍາລົງຊີວິດຫຼາຍຂຶ້ນ. ການສືບຕໍ່ສຸມໃສ່ວຽກງານດັ່ງກ່າວຈະເຮັດໃຫ້ມີຜົນກະທົບທາງບວກໃຫ້ແກ່ການຫຼຸດຜ່ອນຄວາມທຸກຍາກ ແລະ ສະຫວັດດີການສັງຄົມທີ່ດີຂຶ້ນກວ່າເກົ່າ, ເຊິ່ງຈະປະກອບສ່ວນເຮັດໃຫ້ອັດຕາການແຕ່ງງານໄວ ແລະ ອັດຕາການມີລູກໄວຫຼຸດລົງ.

## 5. <u>ການຮ່ວມມືແບບໃຕ້-ໃຕ້ ແລະ ການຮ່ວມມືສາມຫຼ່ຽມ</u>

- ເປັນບູລິມະສິດທີ່ສີ່ ທີ່ກອງປະຊຸມໄດ້ກໍານົດຂຶ້ນ, ບັນດາຄູ່ຮ່ວມພັດທະນາໄດ້ສະແດງຄວາມສົນໃຈຫຼາຍໃນການໃຫ້ຄວາມຊ່ວຍເຫຼືອໂດຍຜ່ານການຄວາມມືແບບໃຕ້-ໃຕ້ ແລະ ການຮ່ວມມືສາມຫຼ່ຽມ ບົນພື້ນ

ຖານຂອງຄວາມສອດຄ່ອງກັບຖະແຫຼງການວຽງຈັນ 2015. ເນື່ອງຈາກວ່າໃນພາກພື້ນອາຊຽນ, ເຫັນວ່າການຮ່ວມມືລັກສະນະນີ້ແມ່ນປະສົບຜົນສໍາເລັດສູງຫຼາຍ ແລະ ສາມາດແກ້ໄຂບັນຫາດ້ານການພັດທະນາໄດ້ຢ່າງຫຼວງຫຼາຍ ເຊິ່ງສາມາດໄປຖອດຖອນບົດຮຽນນໍາໄດ້.

- ພ້ອມນັ້ນ, ກອງປະຊຸມໄດ້ເນັ້ນໜັກວ່າ ການຮ່ວມມືແບບໃຕ້-ໃຕ້ ແລະ ການຮ່ວມມືສາມຫຼ່ຽມ ປຽບເໝືອນ ເສັ້ນທາງສອງເລນ ເຊິ່ງ ສປປ ລາວ ຈະໄດ້ຮັບຜົນປະໂຫຍດໄດ້ຈາກການຖອດຖອນບົດຮຽນຈາກປະສົບການຂອງປະເທດອື່ນ ແລະ ໃນຂະນະດຽວກັນປະເທດອື່ນກໍ່ສາມາດມາຖອດຖອນບົດຮຽນກັບປະສົບການຂອງ ສປປ ລາວ ໄດ້. ດັ່ງນັ້ນ, ສິ່ງທີ່ສໍາຄັນແມ່ນການສ້າງຄວາມເຂັ້ມແຂງ ແລະ ຍົກລະດັບໃຫ້ແກ່ກົນໄກການຈັດຕັ້ງທີ່ມີຢູ່ ເພື່ອກໍານົດ ແລະ ຮັບປະກັນຜົນປະໂຫຍດສູງສຸດຈາກການຮ່ວມມືດັ່ງກ່າວ. ສິ່ງດັ່ງກ່າວນີ້ ຈະຊ່ວຍຮັບປະກັນໃຫ້ການຮ່ວມມືແບບໃຕ້-ໃຕ້ ແລະ ການຮ່ວມມືສາມຫຼ່ຽມ ມີຄວາມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງຊາດ, ເຊິ່ງເປັນເຈົ້າຂອງ ແລະ ນໍາພາໂດຍປະເທດຊາດຢ່າງແທ້ຈິງ ບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

## 6. <u>ການຄຸ້ມຄອງເສດຖະກິດມະຫາພາກ ແລະ ການເງິນ</u>

- ຜູ້ເຂົ້າຮ່ວມໄດ້ຊີ້ໃຫ້ເຫັນວ່າ ຄວາມມີສະຖຽນລະພາບທາງດ້ານເສດຖະກິດມະຫາພາກ ແລະ ການຄຸ້ມຄອງທາງດ້ານການເງິນພາກລັດຢ່າງຮັດກຸມ ຊ່ວຍເຮັດໃຫ້ການລົງທຶນພາກເອກະຊົນມີການຂະຫຍາຍຕົວເຊິ່ງເປັນການສົ່ງເສີມວຽກງານ SDGs ແລະ ການຫຼຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາມີຄວາມຄືບໜ້າຫຼາຍຂຶ້ນ.
- ພ້ອມນັ້ນ ຜູ້ເຂົ້າຮ່ວມກໍ່ໄດ້ໃຫ້ຄວາມສໍາຄັນຕໍ່ຄວາມພະຍາຍາມຂອງລັດຖະບານໃນການຄຸ້ມຄອງລາຍຈ່າຍ ແລະ ໜີ້ສິນພາກລັດ ຄຽງຄູ່ກັນກັບການປະຕິຮູບທາງດ້ານລາຍຮັບພາຍໃນ ແລະ ຄວາມໂປ່ງໃສທາງດ້ານງົບປະມານ ລວມທັງການຮັກສາອັດຕາແລກປ່ຽນໃຫ້ຢູ່ໃນລະດັບທີ່ສາມາດແຂ່ງຂັນໄດ້ ແລະ ຄຸ້ມຄອງຂະແໜງການເງິນໃຫ້ມີສະຖຽນລະພາບ. ນອກນັ້ນ, ກໍ່ໄດ້ເນັ້ນໜັກເຖິງການຮ່ວມມືເພື່ອການພັດທະນາໃນອະນາຄົດໃນການສ້າງແວດລ້ອມທາງດ້ານການລົງທຶນທີ່ເອື້ອອໍານວຍ. ໂດຍສະເພາະຊຸກຍູ້ໃຫ້ທະນາຄານຕ່າງປະເທດພິຈາລະນາບັນຫາເຫຼົ່ານີ້ເປັນພິເສດໃນການຕັດສິນໃຈປ່ອຍກູ້ ແລະໃຫ້ເງິນກູ້ທີ່ມີເງື່ອນໄຂໜ້ອຍ. ດັ່ງນັ້ນ, ການຮ່ວມມືແບບໃຕ້-ໃຕ້ ຍັງຕ້ອງໃຫ້ສອດຄ່ອງກັບການລົງທຶນຂອງພາກເອກະຊົນ.

## 7. <u>ການເປັນຄູ່ຮ່ວມເພື່ອການພັດທະນາ</u>

- ຜູ້ເຂົ້າຮ່ວມໄດ້ເຫັນດີໃຫ້ອົງການຈັດຕັ້ງສັງຄົມມາມີບົດບາດຢູ່ໃນການປັບປຸງຊີວິດການເປັນຢູ່, ການເຂົ້າເຖິງການບໍລິການຂອງລັດ ແລະ ແຫຼ່ງທຶນຂອງປະຊາຊົນທີ່ມີຄວາມສ່ຽງທີ່ສຸດ. ຕໍ່ບັນຫາດັ່ງກ່າວ, ຕ້ອງໄດ້ເພີ່ມການເອົາໃຈໃສ່ໃນລະບຽບການທີ່ສ້າງຂຶ້ນ ເພື່ອເອື້ອອໍານວຍໃຫ້ອົງການຈັດຕັ້ງສັງຄົມໄດ້ເຂົ້າມາເປັນຄູ່ຮ່ວມໃນການປະກອບສ່ວນເຂົ້າໃນການພັດທະນາ.
- ດ້ານຮ່າງດໍາລັດການຊ່ວຍເຫຼືອທາງການເພື່ອການພັດທະນາ, ຜູ້ເຂົ້າຮ່ວມໄດ້ເຫັນດີໃຫ້ມີການປຶກສາຫາລືເພີ່ມເຕີມ ທາງດ້ານວິທີການຍົກລະດັບປະສິດທິພາບໃນການຮ່ວມມືເພື່ອການພັດທະນາ ແລະ ເພີ່ມທະວີການຊ່ວຍເຫຼືອທາງການເພື່ອການພັດທະນາໃຫ້ຫຼາຍຂຶ້ນ. ການແລກປ່ຽນຂໍ້ມູນທາງດ້ານການຊ່ວຍເຫຼືອທາງການເພື່ອການພັດທະນານໍາກັນຢ່າງເປັນປົກກະຕິຈະຊ່ວຍເພີ່ມການຊ່ວຍເຫຼືອໃຫ້ຫຼາຍຂຶ້ນ.

## 8. <u>ການຄຸ້ມຄອງທີ່ດິນ</u>

- ລັດຖະບານໄດ້ຮັບຄໍາຄິດເຫັນຈາກຜູ້ເຂົ້າຮ່ວມໃນການປັບປຸງກົດໝາຍວ່າດ້ວຍທີ່ດິນໃຫ້ມີຄວາມຄືບໜ້າຫຼາຍຂຶ້ນກວ່າເກົ່າ ເຊິ່ງຈະຊ່ວຍເພີ່ມທະວີການຄຸ້ມຄອງ, ເຊົ່າ, ປ້ອງກັນຄວາມປອດໄພ ແລະ ຊົດເຊີຍທີ່ດິນໃຫ້ເຂັ້ມແຂງຂຶ້ນ. ສິ່ງນີ້ ໄດ້ເນັ້ນໃຫ້ເຫັນເຖິງຄວາມສໍາຄັນຂອງທີ່ດິນອັນເປັນຊັບສິນ ໂດຍສະເພາະສໍາລັບຜູ້ທີ່ທຸກຍາກ.

**9. ບັນດາກິດຈະກຳທີ່ຜິດກົດໝາຍ**

- ລັດຖະບານໄດ້ຮັບຄຳແນະນຳໃຫ້ເອົາໃຈໃສ່ຫຼຸດຜ່ອນປະກົດການສໍ້ລາດບັງຫຼວງ, ການລັກລອບຄ້າຂາຍສັດປ່າ ແລະ ການຕັດໄມ້ທີ່ຜິດກົດໝາຍ. ເຊິ່ງຜູ້ເຂົ້າຮ່ວມກໍ່ໄດ້ຮັບຟັງເຖິງການລາຍງານຜົນສຳເລັດໃນການປ້ອງກັນການລັກລອບຄ້າສິ່ງທີ່ຜິດກົດໝາຍ. ແຕ່ຢ່າງໃດກໍ່ຕາມ, ບັນຫານີ້ຍັງເປັນສິ່ງທ້າທາຍຫຼາຍ ໂດຍສະເພາະຢູ່ເຂດຊົນນະບົດ.
- ພ້ອມນັ້ນ, ຍັງໄດ້ຮັບຄຳຮຽກຮ້ອງຈາກຜູ້ເຂົ້າຮ່ວມໃຫ້ເອົາບັນຫາການລັກລອບຄ້າສັດປ່າ ເຂົ້າມາຕື່ມເປັນອີກໜຶ່ງຂະແໜງການຢູ່ໃນກົນໄກໂຕະມົນ. ການຢຸດຕິການລັກລອບຄ້າສັດປ່າ ຈະເປັນການສ້າງພາບພົດອັນດີໃຫ້ແກ່ ສປປ ລາວ ໃນເວທີສາກົນ ແລະ ທັງປະກອບສ່ວນໂດຍກົງໃຫ້ແກ່ການບັນລຸເປົ້າໝາຍ SDGs ທີ່ກ່ຽວຂ້ອງ.

**10. ຂໍ້ມູນສະຖິຕິ**

- ຜູ້ເຂົ້າຮ່ວມໄດ້ຍົກໃຫ້ເຫັນເຖິງ ຄວາມຄືບໜ້າໃນການປັບປຸງຂໍ້ມູນໃຫ້ມີຂໍ້ມູນຍ່ອຍຫຼາຍຂຶ້ນ ໂດຍສະເພາະຂໍ້ມູນທີ່ແບ່ງຕາມເພດ, ແລະ ການຍົກລະດັບຄຸນນະພາບຂອງຂໍ້ມູນສະຖິຕິໃຫ້ສູງຂຶ້ນ ຈະຊ່ວຍເຮັດໃຫ້ການວາງນະໂຍບາຍມີລັກສະນະເປັນຮູບປະທຳຂຶ້ນຕື່ມ ແລະ ທັງເປັນພື້ນຖານໃຫ້ແກ່ການຕິດຕາມກວດກາ, ລາຍງານ ແລະ ເຜີຍແຜ່ວຽກງານ SDGs ນຳອີກ.